# San Diego Unified School District
## *Fact Sheet*

# ນະໂຍບາຍການໃຊ້ໂທຣະສັບມືຖື ແລະ ເຄື່ອງສັນຍານທີ່ໃຊ້ລະບົບອີເລັກໂຕຣນິກ

ກົດຫມາຍຂອງຣັດ (SB 1253) ທີ່ອະນຸມັດໃຊ້ເມື່ອວັນທີ 1 ກໍຣະກະດາ **2003**, ອະນຸຍາດໃຫ້ສະພາສຶກສາກໍານົດນະໂຍບາຍຂອງການໃຊ້ ແລະ ຖືໂທຣະສັບມືຖື (cell phone) ແລະ ເຄື່ອງສັນຍາທີ່ໃຊ້ລະບົບອີແລັກໂຕຣນິກ ເຊັ່ນເພເຈີ (pager) ຢູ່ໃນເຂດໂຮງຣຽນ. ກົດຫມາຍໄດ້ລົບລ້າງກົດຫມາຍຂອງຣັດອັນກ່ອນ ທີ່ຫ້າມບໍ່ໃຫ້ພວກນັກຣຽນຖື ຫລື ໃຊ້ເຄື່ອງສັນຍານຕ່າງໆຢູ່ເຂດໂຮງຣຽນໃນທົ່ວເຂດຣັດ.

ໃນເດືອນທັນວາ ປີ **2002**, ກຸ່ມເຮັດວຽກຂອງຫົວຫນ້າຫມວດໂຮງຣຽນ ແລະ ພໍ່ແມ່ໄດ້ປະຊຸມກັນເພື່ອທົບທວນເບິ່ງກົດຫມາຍໃຫມ່ ແລະ ເລີ້ມວາງກົດເກນນະໂຍບາຍສູນກາງສຶກສາກ່ຽວກັບການຖື ແລະ ໃຊ້ເຄື່ອງສັນຍານຕ່າງໆຂອງພວກນັກຣຽນ. ຈຸດຕົ້ນຕໍແມ່ນພິຈາຣະນາຄວາມປອດພັຍ ແລະ ຄວາມຢູ່ດີສະບາຍ ເພື່ອຮັກສາສະພາບແວດລ້ອມການຮໍ່າຣຽນຂອງພວກນັກຣຽນປອດຈາກສິ່ງລົບກວນ.

ເມື່ອເດືອນວາ **2003**, ສະພາການສຶກສາໄດ້ອະນຸມັດ ນະໂຍບາຍຂອງສະພາ ເລກທີ H-6980, ທີ່ໄດ້ອະນຸຍາດໃຫ້:

- ຖື ແລະ ໃຊ້ ໂທຣະຊັບມືຖື, ເພເຈີ (pager) ແລະ ເຄື່ອງສັນຍານເອແລັກໂຕຣນິກ ຢູ່ໃນເຂດໂຮງຣຽນ, ຢູ່ໃນກິຈກັມຕ່າງໆທີ່ໂຮງຣຽນ – ອຸປຖັມ, ແລະ ຊຶ່ງຢູ່ພາຍໃຕ້ການດູແລ ແລະ ຄວບຄຸມຂອງພະນັກງານສູນກາງສຶກສາທີ່ຖືກອະນຸຍາດຕາມພາວະການທີ່ໄດ້ອະທິບາຍໄວ້ແລ້ວນັ້ນ.
- ນັກຣຽນທຸກຄົນ (K-12) ອາດສາມາດໃຊ້ເຄື່ອງເຫລົ່ານີ້ຢູ່ໃນເຂດໂຮງຣຽນກ່ອນໂມງເຂົ້າຣຽນ ແລະ ຫລັງຈາກໂມງເລີກໂຮງຣຽນ.
- ພວກນັກຣຽນມັທຍົມ ຊັ້ນ **9 – 12**, ອາດສາມາດໃຊ້ເຄື່ອງເຫລົ່ານີ້ໃນລະຍະໂມງອາຫານທ່ຽງ.
- ເຄື່ອງສັນຍາເຫລົ່ານີ້ຕ້ອງເກັບມ້ຽນໄວ້ບໍ່ໃຫ້ຄົນເຫັນ ແລະ ປິດສວິດໄວ້ໃນເວລາມີໂຄງການສິດສອນ ແລະ ເວລາຢູ່ໃນຫ້ອງຣຽນ. ບໍ່ອະນຸຍາດໃຫ້ໃຊ້ເຄື່ອງສັນຍານເຫລົ່ານີ້ ໄປລົບກວນການສິດສອນ ແລະ ສະພາບແວດລ້ອມຂອງການສຶກສາຮໍ່າຣຽນ. ເຈົ້າຫນ້າໂຮງຣຽນ, ຮວມທັງຄຣູໃນຫ້ອງຣຽນ, ສາມາດເອົາເຄື່ອງສັນຍານເຫລົ່ານີ້ຈາກພວກນັກຣຽນໄດ້ ຖ້າໃຊ້ໃນຊົ່ວໂມງທີ່ບໍ່ອະນຸຍາດໃຫ້ໃຊ້. ການໃຊ້ເຄື່ອງສັນຍານເຫລົ່ານີ້ ຊໍ້າຊາກຫລາຍຄັ້ງໃນຊົ່ວໂມງທີ່ບໍ່ອະນຸຍາດໃຫ້ໃຊ້ນັ້ນ ອາດຈະເຖິງຂັ້ນຖືກປະຕິບັດລະບຽບວິນັຍ/ຖືກໂທດ.

## ຂໍ້ສລູບ

- ❖ **ພວກນັກຣຽນອາດສາມາດມີໂທຣະສັບມືຖື, ເພເຈີ (pager) ແລະ ເຄື່ອງສັນຍານແບບອີແລັກໂຕຣນິກອື່ນໆຢູ່ໃນເຂດໂຮງຣຽນ ແລະ ຢູ່ໃນຣົຖເມ, ຢູ່ໃນກິຈກັມຕ່າງໆໂຮງຣຽນເປັນຜູ້ອຸປະຖັມ, ແລະ ພາຍໃຕ້ການດູແລຮັກສາຂອງພະນັກງານສູນກາງສຶກສາ.**
- ❖ **ພວກນັກຣຽນທຸກຄົນ (K-12) ສາມາດໃຊ້ເຄື່ອງສັນຍານເຫລົ່ານີ້ໄດ້ ກ່ອນ ແລະ ຫລັງຈາກໂມງເລີກໂຮງຣຽນ.**
- ❖ **ພວກນັກຣຽນມັທຍົມ ປີທີ 9 – 12 ອາດສາມາດໃຊ້ເຄື່ອງສັນຍານເຫລົ່ານີ້ໄດ້ ໃນລະຍະຊົ່ວໂມງກິນອາຫານທ່ຽງ.**
- ❖ **ເຄື່ອງສັນຍານເຫລົ່ານີ້ຕ້ອງມ້ຽນໄວ້ບໍ່ໃຫ້ຄົນເຫັນ ແລະ ປິດສວິດໄວ້ ໃນລະຍະເວລາມີໂຄງການສິດສອນ ແລະ ຢູ່ໃນຫ້ອງຣຽນ.**
- ❖ **ເຈົ້າຫນ້າທີ່ໂຮງຣຽນ, ຮວມທັງຄຣູໃນຫ້ອງຣຽນອາດສາມາດຍຶດເອົາເຄື່ອງສັນຍານຈາກພວກນັກຣຽນ ຖ້າເຂົາເຈົ້າໃຊ້ໃນຊົ່ວໂມງທີ່ບໍ່ອະນຸຍາດໃຫ້ໃຊ້.**
- ❖ **ການໃຊ້ເຄື່ອງສັນຍານເຫລົ່ານີ້ຊໍ້າຊາກຫລາຍຄັ້ງ ໃນຊົ່ວໂມງທີ່ບໍ່ອະນຸຍາດໃຫ້ໃຊ້ນັ້ນ ອາດເຖິງຂັ້ນຖືກປະຕິບັດລະບຽບວິນັຍ/ຖືກໂທດ.**

ນະໂຍບາຍຂັ້ນສຸດທ້າຍນັ້ນຖືກອະນຸມັດໃຊ້ຫລັງຈາກຫົວຫນ້າຫມວດໂຮງຣຽນ, ນາຍຄຣູ, ພໍ່ແມ່ນັກຣຽນ ແລະ ນັກຣຽນໄດ້ໃຫ້ຄວາມຄິດເຫັນແລ້ວ. ຈະຕິດຕາມໄປດ້ວຍການດັດແປງແກ້ໄຂຕາມລະບຽບການປົກຄອງ ຕາມຄວາມຈໍາເປັນ.

ເປັນການເຕືອນມາຍັງພໍ່ແມ່ ແລະ ນັກຣຽນ ເມື່ອເວລາເກີດສະພາບສຸກເສີນນັ້ນ, ໂທຣະສັບມືຖື ອາຈະຕິດອັດຍຸ້ງຍາກ ຍ້ອນວ່າຜູ້ໃຊ້ໂທຣະສັບຫລາຍ. ຖ້າມີສິ່ງນີ້ເກີດຂື້ນ, ການຕິດຕໍ່ສຸກເສີນກໍ່ອາດຈະມີບັນຫາຄືກັນ. ດັ່ງນັ້ນ ຈຶ່ງເປັນສິ່ງສໍາຄັນວ່າ ໂທຣະສັບມືຖື ແລະ ເຄື່ອງສັນຍານອື່ນໆຕ້ອງໄດ້ໃຊ້ ຢ່າງຈໍາກັດ ເພື່ອໃຫ້ການບໍຣິການສຸກເສີນມີຄວາມສໍາຄັນຮີບດ່ວນກວ່າຫມູ່ ໃນການຊ່ວຍເຫລືອພວກນັກຣຽນ ແລະ ພວກພະນັກງານຢູ່ໃນໂຮງຣຽນ.

ລາຍລະອຽດຕິດຕໍ່ຫາ: **Administrative and Legislative Services: (619) 725 – 7086**

www.sandi.net

**Becoming America's Best**

*XK., 10/27/06 Factsheet, Cellular Telephone and Electronic Signaling Device Policy/Lao Version*